# ບົດກ່າວເປີດ

**ໂດຍ: ທ່ານ ນ. ສີສົມບູນ ອຸນາວົງ ຫົວໜ້າກົມຮ່ວມມືສາກົນ**
**ກະຊວງແຜນການ ແລະ ການລົງທຶນ**
**ໃນກອງປະຊຸມ ປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ**

**ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ**

*ໃນວັນທີ 3 ຕຸລາ 2024, ທີ່ ໂຮງແຮມ ສຸພັດຕາ, ນະຄອນຫຼວງວຽງຈັນ*

---

**ຮຽນ:**
- **ທ່ານ ບັກໂຄເດັຍ ເບີຄານ໋ອຟ ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວທີ່ນັບຖື;**
- **ບັນດາ ທ່ານຫົວໜ້າຫ້ອງການ/ຮອງຫົວໜ້າຫ້ອງການ, ຫົວໜ້າກົມ/ຮອງຫົວໜ້າກົມ, ຫົວໜ້າກອງເລຂາໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ ທີ່ນັບຖື;**
- **ບັນດາທ່ານເອກອັກຄະລັດຖະທູດ, ທູຕານຸທູດ, ຫົວໜ້າອົງການຈັດຕັ້ງສາກົນ ແລະຄູ່ຮ່ວມພັດທະນາ ທີ່ນັບຖື;**

**ບັນດາທ່ານແຂກທີ່ມີກຽດ ທ່ານ ຍິງ ແລະທ່ານຊາຍ ທີ່ຮັກແພງ.**

ຂ້າພະເຈົ້າ ໃນນາມຕາງໜ້າໃຫ້ ກະຊວງແຜນການ ແລະການລົງທຶນ ກໍ່ຄືລັດຖະບານ ສປປ ລາວ ຮູ້ສຶກເປັນກຽດຢ່າງຍິ່ງ ທີ່ໄດ້ເປັນປະທານ ແລະກ່າວເປີດ ກອງປະຊຸມປະທານ ແລະປະທານຮ່ວມໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ເຊິ່ງເປັນກອງປະຊຸມທີ່ສຳຄັນ ໃນການປຶກສາຫາລື - ແລກປ່ຽນບົດຮຽນ ລວມທັງ ສ້າງຄວາມເຂົ້າໃຈເປັນອັນໜຶ່ງອັນດຽວກັນ ເພື່ອຮັບປະກັນທາງດ້ານເນື້ອໃນ ໃຫ້ແກ່ກອງປະຊຸມໂຕະມົນ ປະຈຳປີ 2024 ທີ່ຈະຈັດຂຶ້ນໃນວັນທີ 14 ພະຈິກ 2024 ນີ້.

ຈຸດປະສົງກອງປະຊຸມມື້ນີ້ແມ່ນ ເພື່ອລາຍງານຄວາມຄືບໜ້າ ໃນການກະກຽມຄວາມພ້ອມໃຫ້ແກ່ ການຈັດກອງປະຊຸມໂຕະ ມົນ ປະຈຳປີ 2024; ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນວຽກບູລິມະສິດ ຂອງບັນດາ 10 ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ໂດຍສະເພາະວຽກຂະບວນການໂຕະມົນ ແລະປຶກສາຫາລື ກ່ຽວກັບວຽກງານການກະກຽມຄວາມພ້ອມໃນການປ້ອງກັນ ແລະຕອບໂຕ້ໄພພິບັດ.

ການກະກຽມກອງປະຊຸມໂຕະມົນ 2024 ພວກເຮົາໄດ້ເຮັດສຳໂດຍພື້ນຖານກ່ຽວກັບ ຮ່າງແນວຄວາມຄິດກອງປະຊຸມໂຕະມົນ ປະຈຳປີ 2024 ໂດຍໄດ້ຜ່ານການປຶກສາຫາລືໃນ ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານຂະບວນການໂຕະມົນ ປະຈຳປີ 2023 (RTP Retreat 2023) ໃນຕົ້ນເດືອນພຶດສະພາ, ກອງປະຊຸມປະທານ ແລະ ປະທານຮ່ວມ ຄັ້ງທີ 1 ໃນເດືອນ ກໍລະກົດ ແລະກອງປະຊຸມປຶກສາຫາລືກັບ ບັນດາຄູ່ຮ່ວມພັດທະນາ ແລະອົງການຈັດຕັ້ງສາກົນ ທີ່ບໍ່ມີສຳນັກງານ/ອົງການ ຕັ້ງຢູ່ ສປປ ລາວ ຜ່ານມາແລ້ວ. ເຊິ່ງກອງເລຂາຂະບວນການໂຕະມົນ ກໍ່ໄດ້ນຳເອົາເນື້ອໃນຈິດຂອງການປຶກສາຫາລື ແລະຄຳຄິດເຫັນ ສັງລວມ ລາຍງານຕໍ່ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ

ກັນຍາ ແລະລາຍງານໃຫ້ແກ່ຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ເປັນທີ່ຮຽບຮ້ອຍແລ້ວ ແລະກໍ່ໄດ້ດັດປັບເຂົ້າໃນ ຮ່າງແນວຄວາມຄິດກອງປະຊຸມໂຕະມົນ ປະຈຳປີ 2024 ຕາມຄຳຄິດເຫັນໃນກອງປະຊຸມຕ່າງໆຜ່ານມາ.

ໃນນາມປະທານຮ່ວມໃນກອງປະຊຸມມື້ນີ້ ຂ້າພະເຈົ້າຮັບຮູ້ວ່າ ຫຼາຍໜ່ວຍງານຂະແໜງການ ກໍ່ໄດ້ຈັດກອງປະຊຸມປຶກສາຫາລື ໃນລະດັບຕ່າງໆຂອງຕົນເປັນທີ່ຮຽບຮ້ອຍແລ້ວ (ໜ່ວຍງານເສດຖະກິດມະຫາພາກ, ໜ່ວຍງານຂະແໜງການການຄ້າ ແລະພັດທະນາພາກເອກະຊົນ, ໜ່ວຍງາຂະແໜງການສຶກສາທິການ, ໜ່ວຍງານເກັບກູ້ລະເບີດບໍ່ທັນແຕກ ແລະ ໜ່ວຍງານອື່ນໆ... ຂໍສະແດງຄວາມຊົມເຊີຍມານະທີ່ນີ້ດ້ວຍ ຂໍຊົມເຊີຍ) ສະນັ້ນ, ຂ້າພະເຈົ້າຂໍຮຽກຮ້ອງມາຍັງໜ່ວຍງານຂະແໜງການທີ່ຍັງເຮັດບໍ່ທັນເຮັດສຳເລັດກອງປະຊຸມຂອງຕົນ ຈົ່ງຮີບຮ້ອນຈັດຕັ້ງປະຕິບັດ ແລະ ສະຫຼູບສັງລວມບັນຫາ, ສິ່ງທ້າທາຍ ທີ່ພົ້ນເດັ່ນ ລາຍງານມາຍັງ ກົມຮ່ວມມືສາກົນ, ກະຊວງແຜນການ ແລະການລົງທຶນ ໃນນາມກອງເລຂາຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ເພື່ອຊາບ ແລະເປັນຂໍ້ມູນ ເພື່ອສ້າງເປັນບົດລາຍງານ ເພື່ອຮັບໃຊ້ເຂົ້າໃນເນື້ອໃນຂອງກອງປະຊຸມໂຕະມົນ 2024 ພ້ອມທັງ ອັບໂຫຼດຂຶ້ນເວບໄຊສ໌ຂະບວນການໂຕະມົນ.

**ບັນດາທ່ານທີ່ນັບຖື ທັງຫຼາຍ**

ດັ່ງທີ່ພວກເຮົາຮູ້ນຳກັນ, ສະພາແຫ່ງຊາດ ພວມທ້າງຫາກະກຽມ ຈັດກອງປະຊຸມສະພາແຫ່ງຊາດໃນເດືອນພະຈິກທີ່ຈະມາເຖິງນີ້ ເພື່ອປຶກສາຫາລື ແລະຕັດສິນບັນຫາສຳຄັນຕ່າງໆ ຂອງລັດຖະບານ ໃນນັ້ນ, ບົດສະຫລຸບລາຍງານການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2024 ແລະ ແຜນວຽກຈຸດສຸມ ລວມທັງ ທິດທາງໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2025 ທີ່ເປັນຫົວຂໍ້ທີ່ສຳຄັນຢູ່ໃນກອງປະຊຸມໂຕະມົນ ປະຈຳປີ 2024 ກໍ່ຈະໄດ້ນຳມາລາຍງານ ແລະປຶກສາຫາລືຢູ່ໃນກອງປະຊຸມສະພາແຫ່ງຊາດ ເຊິ່ງລັດຖະບານ ຍັງຈະສືບຕໍ່ສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນ ເຊັ່ນ: ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາເສດຖະກິດ - ການເງິນ, ການເພີ່ມຂຶ້ນຂອງອັດຕາເງິນເຟີ້, ເງິນກີບອ່ອນຄ່າ, ການເພີ່ມຂຶ້ນຂອງລາຄາສິນຄ້າ ເຊິ່ງຈະຕ້ອງໄດ້ປະຕິບັດໃຫ້ເປັນລະບົບ ແລະມີມາດຕະການທີ່ເຂັ້ມງວດ ເປັນຕົ້ນ: 1/. ມາດຕະການດ້ານເງິນຕາ, 2/. ມາດຕະການດ້ານການເງິນ-ງົບປະມານ 3/. ມາດຕະການດ້ານການຜະລິດ, 4/. ມາດຕະການດ້ານການຄ້າ ແລະ 5/. ມາດຕະການດ້ານຈິດຕະສາດ-ສັງຄົມ.

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງ ຄົມແຫ່ງຊາດ ປະຈຳປີ 2024 ແມ່ນຢູ່ໃນທ່າມກາງສະພາບເສດຖະກິດສາກົນທີ່ຜັນແປຢ່າງສັບສົນ ໂດຍສະເພາະແມ່ນສົງຄາມການຄ້າ, ຄວາມເຄັ່ງຕຶງດ້ານພູມສາດ-ການເມືອງ, ເສດຖະກິດໂລກຖົດຖອຍ. ພ້ອມກັນນັ້ນ, ສະພາບພາຍໃນພວກເຮົາຍັງພົບບັນຫາການຂາດດຸນງົບປະມານ, ຂາດດຸນການຊຳລະໜີ້ສິນກັບຕ່າງປະເທດ ແລະຄັງສຳຮອງເງິນຕາຕ່າງປະເທດຍັງຕ່ຳ ບວກກັບ ປີ 2024 ນີ້ ໄດ້ເກີດໄພທຳມະຊາດນ້ຳຖ້ວມຢູ່ຫຼາຍແຂວງ ເຊິ່ງໄດ້ເຮັດເນື້ອທີ່ທຳການຜະລິດ, ພື້ນຖານໂຄງລ່າງເສຍຫາຍຫຼາຍພໍສົມຄວນ. ຕໍ່ກັບບັນຫາດັ່ງກ່າວ ລັດຖະບານ, ອຳນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ລວມທັງ ປວງຊົນລາວທັງຊາດ, ບັນດາປະເທດເພື່ອນມິດ, ອົງສາຄະນາຍາດສາກົນ ແລະອົງການຈັດຕັ້ງສາກົນ ກໍ່ໄດ້ເອົາໃຈໃສ່ສຸມທຸກກຳລັງແຮງຂອງຕົນໃຫ້ການ

ສະໜັບສະໜູນຊ່ວຍເຫຼືອ ແລະຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆ ທີ່ລັດຖະບານກຳນົດອອກ ດ້ວຍຄວາມຕັ້ງໜ້າເປັນເຈົ້າການ ແລະມີຄວາມຮັບຜິດຊອບສູງ. ຂ້າພະເຈົ້າເຊື່ອໝັ້ນວ່າ: ໃນທ້າຍໄລຍະປີ 2024 ການພັດທະນາເສດຖະກິດ-ສັງຄົມ ຈະສືບຕໍ່ດຳເນີນໄປຢ່າງຕັ້ງໜ້າກວ່າເກົ່າ ແລະຄາດວ່າ ເສດຖະກິດ ສປປ ລາວ ຈະຂະຫຍາຍຕົວຢ່າງຕໍ່ເນື່ອງ ບັນລຸໄດ້ຕາມລະດັບຄາດໝາຍທີ່ວາງໄວ້.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ໃນກອງປະຊຸມມື້ນີ້ຈະໄດ້ມີການປຶກສາຫາລື ແລະປະກອບຄຳຄິດຄຳເຫັນ ຕໍ່ການກະກຽມກອງປະຊຸມໂຕະມົນ ປະຈຳປີ 2024, ຄວາມຄືບໜ້າຂອງ 10 ໜ່ວຍງານຂະແໜງການ ໃນການຈັດຕັ້ງປະຕິບັດ ຜົນຂອງກອງປະຊຸມໂຕະມົນ ປະຈຳປີ 2023 ທີ່ຜ່ານມາ ແລະການປະກອບສ່ວນຂອງໜ່ວຍງານຂະແໜງການ ຕໍ່ການຈັດຕັ້ງປະຕິບັດແຜນບູລິມະສິດຂອງຂະແໜງການ ກໍ່ຄືປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2024 ແລະແຜນປີ 2025 ແລະການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030).

ອີກເທື່ອໜຶ່ງ, ຂໍສະແດງຄວາມຂອບໃຈມາຍັງ **ທ່ານ ບັກໂຄເດັຍ ເບີຄານ໋ອຟ ຜູ້ປະສານງານອົງ ການສະຫະປະຊາຊາດ ປະຈຳ ສປປ ລາວ** ທີ່ໃຫ້ກຽດເປັນປະທານຮ່ວມກອງປະຊຸມ. ຂໍສະແດງຄວາມຂອບໃຈ ບັນດາທ່ານແຂກທີ່ມີກຽດທຸກທ່ານ ທີ່ໄດ້ສະຫຼະເວລາເຂົ້າຮ່ວມກອງປະຊຸມໃນມື້ນີ້.

ສຸດທ້າຍນີ້, ຂໍອວຍພອນໄຊອັນປະເສີດມາຍັງ ທ່ານປະທານຮ່ວມ ແລະ ບັນດາທ່ານແຂກທີ່ມີກຽດ ທີ່ເຂົ້າຮ່ວມກອງປະຊຸມ ຈົ່ງມີສຸຂະພາບແຂງແຮງ ມີຄວາ ມຜາສຸກໃນຊີວິດສ່ວນຕົວ ແລະຄອບຄົວ ສືບຕໍ່ພັດທະນາ ສປປ ລາວ ໃຫ້ກ້າວໄປຢ່າງບໍ່ຢຸດຢັ້ງ.

ນະໂອກາດອັນສະຫງ່າລາສີນີ້ ຂ້າພະເຈົ້າຂໍກ່າວເປີດກອງປະຊຸມ ຢ່າງເປັນທາງການ ນັບແຕ່ວິນາທີນີ້ເປັນຕົ້ນໄປ

**(ຂໍຂອບໃຈ) !**

----------------------------------